# ໜັງສືອຸປະຍົກໜີ (ອົພຍົກ)

ໃຈຄວາມສຳຄັນ : ການໄຖ່ໂທດ

ຂໍ້ຄວາມສຳຄັນ : ບົດ ໑:໒໒

ຈຳນວນບົດ : ໔໐ ບົດ

ແຕ່ປີ ໑໔໐໐ ກ່ອນ ຄ.ສ.

ຜູ້ຂຽນ : ທ່ານໂມເຊ

໑. ຄຳນຳ.

ຄຳວ່າ "ອົພຍົກ" ແປວ່າ "ຍ້າຍໜີ" ດັ່ງນັ້ນໜັງສືເຫລັ້ມນີ້ຈຶ່ງກ່າວເຖິງຄວາມຍາກລຳບາກເມື່ອເວລາອອກຈາກປະເທດເອຢິບໂດຍທ່ານໂມເຊເປັນຜູ້ແນະນຳ.

ແລ້ວຄອບຄົວຂອງຍາໂຄບກໍກາຍເປັນຊາດອິສຣາເອັນ (ຕົ້ນເດີມ ໔໖:໒໗, ຈົດເຊັນບານຊີ ໑:໒໕).

໒. ຂນະເວລາ ພວກອິສຣາເອັນ ໄດ້ ຢູ່ ປະເທດ ເອຢິບມານ ເຖິງຣະຫວ່າງ ໔໓໐ ປີ (ອົພຍົກ ໑໒:໔໐) ຄືວ່າຕັ້ງແຕ່ໂຢເຊັບຕາຍໄປຈົນເຖິງເວລາໂມເຊໄດ້ຕັ້ງທັບອາໄສ ແລະໂມເຊໄດ້ດຳເນີນຊີວິດຢູ່ໃນໂລກນີ້ປະມານ ໑.໔໐໐ ປີກ່ອນພຣະເຢຊູຈຶ່ງໄດ້ສເດັດມາ.

໓. ຄຳປຽບທຽບ:

໑. ລູກແກະ: ແຫ່ງບໍ່ສຄາ ປຽບເຖິງການໄຖ່ໂທດ ຂອງອົງ ພຣະຄຣິສ (໑ ໂກຣິນໂທ ໕:໔–໘, ໂຢຮັນ ໑:໒໙, ເຫບເລີ ໙:໑໔, ຄື:

ກ. ຕ້ອງເອົາລູກແກະທີ່ປາສຈາກພິດ ໑໒:໕ (໑ ເປໂຕ ໑:໑໘-໑໙)

ຂ. ຕ້ອງເອົາເລືອດທາປະຕູ ໑໒:໗ (ໂຢຮັນ ໑໙:໓໖)

ຄ. ຕ້ອງບໍ່ ຫັກກະດູກ ບົດ ໑໒:໔໖ (ໂຢຮັນ ໑໙:໓໖)

໒. ມານາ ໃນບົດທີ ໑໖ ປຽບເຖິງພຣະເຢຊູຜູ້ຊົງເປັນເຂົ້າ ຈີ່ອັນມີຊີວິດຂອງເຮົາ (ໂຢຮັນ ໖:໔໘–໕໑)

໓. ຫີນດານ ບົດ ໑໗:໖ ທ່ານໂມເຊໄດ້ຕີຫີນນັ້ນນ້ຳໄດ້ໄຫລ ອອກ ພຣະເຢຊູຊົງເປັນຫີນດານ ແລະຊົງໄດ້ຖືກຕີຕາງພວກ ເຮົາ (ເອຊາອີ ໕໓:໔–໕) ກັບຊົງເປັນນ້ຳອັນມີຊີວິດຂອງ ເຮົາ ໑ ໑ ໂກຣິນໂທ ໑໐:໔, ໂຢຮັນ ໗:໓໗)

໔. ຫັບອາໄສ: ປຽບເຖິງພຣະເຢຊູເອງທີ່ຊົງໝາຍຄວາມວ່າ ພຣະເຈົ້າຊົງສຖິດຢູ່ກັບຄົນທັງຫລາຍ (ຖືກຕ້ອງກັບ ໂຢຮັນ ໑:໑໔) ຍັງມີສິ່ງຕ່າງໆ ອີກ ທີ່ຄວາມໝາຍເຖິງພຣະເຢຊູຄື:

໑. ປະຕູ ໝາຍເຖິງທາງເຂົ້າຂອງພວກອິສຣາເອັນ ພຣະ ເຢຊູຊົງກ່າວວ່າເຮົາເປັນປະຕູ (ໂຢຮັນ ໑໐:໙)

໒. ແທ່ນບູຊາ ໝາຍເຖິງໄມ້ກາງແຂນ

໓. ຊາມໃສ່ນ້ຳ ໝາຍເຖິງການຊຳຣະລ້າງ (ໂຍຮັນ ໑໓:໑–໑໐)

໔. ເຂົ້າຈີ່ໃນໂຕະ ໝາຍເຖິງພຣະເຢຊູເອງ

໕. ແທ່ນໃສ່ເຄື່ອງຫອມ ໝາຍເຖິງຄວາມອ້ອນວອນຂອງພຣະຄຣິດ

໖. ຕະກຽງເຈັດກອກ ໝາຍເຖິງບຸດມະນຸດ (ໂຍຮັນ ໘:໑໒ ຄຳປາກົດ ໑:໑໒–໑໓)

໗. ຜ້າກັ້ງ ໝາຍເຖິງເນື້ອໜັງຂອງພຣະອົງ (ເຮັບເຣີ ໑໐:໒໐)

໘. ຝາອັດຫີບຄຳສັນຍາ ໝາຍເຖິງພຣະຄຸນຂອງພຣະເຈົ້າ (ເຮັບເຣີ ໙:໕ ໂລມ ໓:໒໕)

໕. ເລື່ອງແລະເຫດສຳຄັນ:

໑. ໂມເຊໄດ້ພົ້ນຈາກນ້ຳ ບົດ ໒

໒. ພຣະເຈົ້າຊົງປະກົດແກ່ໂມເຊ ບົດ ໓

໓. ໄພທໍຣະມານ ທັງ ໑໐ ປະການ ບົດ ໗–໑໐

໔. ການຈັດຕຽມປັສຄາ ບົດ ໑໔

໕. ການຂ້າມທະເລແດງ ບົດ ໑໔

ຝ. ພຣະເຈົ້າປະທານພຣະບັນຍັດ ໑໐ ຂໍ້ ທີ່ພູເຂົາຊີນາອີ (ຊີນາຍ) ບົດ ໒໐

ຖ. ການສ້າງທັບອາໄສໃນບ່າດິນຊາຍ ບົດ ໒໕:໒໗

ດ. ການແບ່ງເປັນພາກ:

ພາກ ທີ ໑ ຕັ້ງແຕ່ສໄໝພວກອິດສຣາເອັນຢູ່ເມືອງເອຢິບ ບົດ ໑–໑໒

,, ໒ ພວກເຂົາອົພຍົກອອກຈາກເມືອງເອຢິບ ບົດ ໑໓–໑໕

,, ໓ ພວກເຂົາຢູ່ທີ່ພູເຂົາຊີນາຍ ບົດ ໑໕–໒໐